ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໔໔/ປພຖຊ/໑໕໐໔໐໙**

# ບົດຄວາມ

## ຕອບໂຕ້ທ່ານສຸທັມ ສາກົນນິຍົມ

## ທູດລາວ ປະຈຳປະເທດ **Belgique.** (ຕອນ 3).

ທ່ານທູດ ອ້າງວ່າ ເສດຖະກິດຂອງລາວ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ໂດຍເອົາ GDP. ມາຍົກໃຫ້ເບິ່ງ ວ່າ ທຳອິດ, ມີພຽງ 42% ຮອດປີ 2007 ມີ 7,5% ແລະ 2008 ມີ 8,2% ຈາກບ່ອນ ມີ ສອງຕື້ກີບ ມາເປັນ ສີ່ສິບຫ້າຕື້ກີບ. ເສດຖະກິດຂອງລາວ ຂື້ນຢ່າງຕໍ່ເນື່ອງ. ແຕ່ GDP. ທີ່ທ່ານທູດເອົາອອກມາອວດອ້າງນັ້ນ, ມັນບໍ່ແມ່ນ GDP. (ພົນຜລິດ) ຂອງປະຊາຊົນລາວ. ມັນແມ່ນ GDP. ຂອງກຸ່ມຄົນ ປະມານ 15% ຢູ່ຕາມຕົວເມືອງ ທີ່ເປັນນັກທຸຣະກິດ, ພໍ່ຄ້າຊາວຂາຍ, ບໍຣິສັດຫ້າງຮ້ານຕ່າງໆ ຊຶ່ງລ້ວນແລ້ວແຕ່ເປັນຄົນວຽດນາມ, ເປັນຄົນຈີນ, ແລະເປັນຍາດພີ່ນ້ອງເສັ້ນສາຍຂອງຄນະພັກຣັດ. ສ່ວນປະຊາຊົນລາວ 85% ນັ້ນ ມີຣາຍໄດ້ ບໍ່ເຖິງ 2 ດອນລາສະຫະຣັດຕໍ່ວັນ!.

ທ່ານທູດຍັງໄດ້ອະທິບາຍວ່າ ຣາຍໄດ້ສ່ວນໃຫຍ່ ມາຈາກການຂາຍທາດແຮ່ໂລຫະ ຄຳ, ທອງແດງ. ແຕ່ທ່ານບໍ່ໄດ້ກ່າວເຖິງຜົນກຳໄຣ ທີ່ບໍຣິສັດຕ່າງຊາດ ໄດ້ຈາກບໍ່ຄຳເຊໂປນ, ບໍ່ຄຳພູເບ້ຍ, ບໍ່ຄຳ, ບໍ່ທອງແດງ ພູຄຳແຕ່ຢ່າງໃດເລີຍ!. –ພຽງແຕ່ບໍ່ຄຳເຊໂປນບ່ອນດຽວ, ບໍຣິສັດ OXIANA ໄດ້ກຳໄຣ ໃນປີ 2003, 8,2 ລ້ານດອນລາສະຫະຣັດ. ໃນປີ 2004 ໄດ້ກຳໄຣ 19,9 ລ້ານດອນລາສະຫະຣັດ. ໃນປີ 2005 ໄດ້ກຳໄຣ 61,8 ລ້ານດອນລາສະຫະຣັດ. ໃນລະຍະ ສາມປີຕໍ່ມາ

ບໍຣິສັດ ມີເປົ້າໝາຍ ຂຸດໃຫ້ໄດ້ທອງແດງ 60 ເຖິງ 120tons. Zinc (ຊືນ) 150.000tons ແລະ 100,000oz ເປັນຄໍາແລະເງິນ. ເມື່ອການຜລິດ ໄດ້ເພີ້ມຂື້ນ ສອງເທົ່າຕົວ...ໃນປີ 2010 ບໍຣິສັດ ກໍຈະໄດ້ກໍາໄຣເຖິງ 10ພັນລ້ານ ຫລືວ່າ 10 ຕື້ດອນລາ ສະຫະຣັດ. ພັກຣັດ ໄດ້ນໍາເຂົາພຽງແຕ່ 10%, ມັນກຸ້ມແລ້ວບໍ່ ທີ່ປູ່ຍ່າຕາຍາຍຂອງພວກເຮົາ ໄດ້ປົກປັກຮັກສາມາ ໄວ້ໃຫ້ລູກລາວຫລານລາວ ດ້ວຍເລືອດແລະນໍ້າຕາ ມາໄດ້ຫລາຍເຊັ່ນຄົນ ມາແລ້ວ?

ທ່ານທູດ ຍັງໄດ້ຍົກຍ້ອງວ່າ "ພັກຣັດ ມີການສ້າງສາພັທນາປະເທດ ຢ່າງບໍ່ເຄີຍມີມາກ່ອນ, ເຊັ່ນ: ຂົວ ຂ້າມນໍ້າຂອງ 3-4 ແຫ່ງ, ທາງຣົດໄຟ, ຖນົນຫົນທາງຕ່າງໆອີກຫລາຍສາຍ. ໃນຄວາມເປັນຈິງແລ້ວ, ໂຄງການສ້າງຂົວຂ້າມແມ່ນໍ້າຂອງ, ສ້າງທາງຣົຖໄຟ, ສ້າງເຂື່ອນໄຟຟ້າ, ຂຸດຄົ້ນບໍ່ແຮ່ໂລຫະ ແລະຖນົນ ເຊື່ອມຕໍ່ປະເທດເພື່ອນບ້ານຕ່າງໆເຫລົ່ານີ້ ໄດ້ມີຢູ່ໃນແຜນການກໍ່ສ້າງ ມາດົນນານແລ້ວ! ແຕ່ຣັຖບານ ພຣະຣາຊອານາຈັກລາວໃນເມື່ອກ່ອນ ໄດ້ພິຈາຣະນາເຫັນວ່າ "ປະເທດຊາດ ແລະປະຊາຊົນ ຈະໄດ້ຮັບຜົນເສັຽຫາຍ ຫລາຍກວ່າຜົນໄດ້! ບໍ່ກຸ້ມຄ່າ ກັບຄວາມປາຖນາດີ ຂອງວິຣະບຸຣຸສລາວ ທີ່ໄດ້ເສັຽສລະຊີວິດເລືອດເນື້ອ ເພື່ອປົກປັກຮັກສາ ຊັພຍາກອນທັມຊາດເຫລົ່ານີ້ ໄວ້ໃຫ້ລູກລາວ ຫລານລາວ ໄດ້ຊົມໃຊ້ ເມື່ອພວກເຂົາຕຽມພ້ອມ... ແຕ່ໃນເມື່ອຊາດລາວ, ຄົນລາວ ຍັງບໍ່ທັນມີ ຄວາມຮູ້ ຄວາມສາມາດໃນດ້ານວິຊາການ, ໃນດ້ານບໍຣິຫານທຸຣະກິດ ຣະດັບສາກົນແລ້ວ, ກໍບໍ່ມີ ຄວາມຈໍາເປັນ ທີ່ຈະເລັ່ງຮີບ ສ້າງສິ່ງເຫລົ່ານີ້ຂຶ້ນມາ ເພື່ອຮັບໃຊ້ຜົນປໂຍດຂອງ ບໍຣິສັດຕ່າງຊາດ ໃຫ້ພວກເຂົາເຂົ້າມາຂຸດຄົ້ນແລະຂົນໜີໄປໄດ້ຢ່າງສດວກສບາຍ.

ໂປຣດຕິດຕາມ ຕອນທີ 4 ຕໍ່ໄປ.

**ສູນກາງຕາງໜ້າ**
**ພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ**
**ກອງວິຈັຍ**
**ວັນທີ ໑໕ ກຸມພາ ໒໐໐໙**